Australian Government

COVID-19 VACCINATION

# ການສັກວັກຊີນຕ້ານ COVID-19 ໃຫ້ແກ່ພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸ

ຂໍ້ມູນຖືກຕ້ອງໃນວັນທີ 12 ສິງຫາ 2021

**ພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸໄດ້ຮັບບູລິມະສິດໃນການສັກຢາວັກຊີນ Pfizer COVID-19, ໂດຍບໍ່ຈຳກັດອາຍຸ.**

ພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸທຸກໆຄົນຈະໄດ້ຮັບການສັກຢາຕ້ານ COVID-19 ຈາກບ່ອນເຮັດວຽກຂອງຕົນ. ອັນນີ້ ແມ່ນລວມເຖິງຄລີນິກສັກຢາວັກຊີນໃນພື້ນທີ່ ຫຼື ຕາມສູນສັກຢາວັກຊີນທີ່ຕັ້ງຂຶ້ນສະເພາະໃນເຂດຂອງທ່ານ.

**ໃຫ້ຖາມສະຖານທີ່ດູແລຜູ້ສູງອາຍຸຫຼືນາຍຈ້າງຂອງທ່ານວ່າທາງເລືອກໃດທີ່ກ່າວມາຂ້າງລຸ່ມນີ້ມີໄວ້ໃຫ້ທ່ານ:**

1. **ຄລີນິກໃນສະຖານທີ່ເຮັດວຽກຂອງທ່ານເອງ:** ຄລີນິກເຫຼົ່ານີ້ແມ່ນດຳເນີນງານໂດຍຜູ້ໃຫ້ບໍລິການສັກຢາວັກຊີນຂອງລັດຖະບານກາງ, GPs ຫຼື ຜູ້ໃຫ້ບໍລິການດູແລຜູ້ສູງອາຍຸ.

2. **ສູນສັກຢາວັກຊີນສະເພາະ:** ສູນເຫຼົ່ານີ້ຈະຕັ້ງຢູ່ໃກ້ກັບສະຖານທີ່ດູແລຜູ້ສູງອາຍຸແລະຈະດຳເນີນງານໂດຍຜູ້ໃຫ້ບໍລິການສັກຢາຂອງລັດຖະບານກາງ.

3. **ຄລີນິກເຄື່ອນທີ່ເຂົ້າເຖິງບ່ອນທີ່ຕ້ອງການ:** ຄລີນິກເຄື່ອນທີ່ຂອງລັດຖະບານກາງຈະກັບຄືນມາສະຖານທີ່ດູແລດູແລຜູ້ສູງອາຍຸເພື່ອດຳເນີນງານແບບຄລີນິກເຂົ້າເຖິງບ່ອນ ໃນ 23 ເຂດລັດຖະບານທ້ອງຖິ່ນ (LGAs) ໃນ greater Sydney, ໃນເຂດ LGAs ທີ່ມີການແຜ່ລະບາດ ໃນເຂດນອກເມືອງຂອງລັດ New South Wales, ແລະ ໃນເຂດທີ່ຖືກຈັດວ່າມີຄວາມສ່ຽງລະດັບສູງສຸດ (Tier 1) ໃນລັດ Victoria ແລະ Queensland.

ນອກນີ້ ທ່ານກໍຍັງສາມາດໄປຮັບການສັກຢາວັກຊີນ COVID-19 Pfizer ໄດ້ທີ່:

1. **ຄລີນິກດູແລຂັ້ນພື້ນຖານ:** ໃຫ້ສະເໜີຕົວວ່າທ່ານເປັນພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸ ເພື່ອໃຫ້ໄດ້ຮັບບູລິມະສິດໃນການເຂົ້າເຖິງ (ພາຍໃນເຈັດມື້) ທີ່ ຫ້ອງກວດຂອງແພດປິ່ນປົວທົ່ວໄປ, ຄລີນິກສັກຢາວັກຊີນຂອງລັດຖະບານກາງ (ຄລີນິກຂອງ GP ທີ່ປິ່ນປົວລະບົບທາງເດີນຫາຍໃຈ), ພະແນກບໍລິການຄຸ້ມຄອງສຸຂະພາບຂອງ

ຊຸມຊົນອາບໍຣິນິໂນລ ຫຼື ທີ່ຮ້ານຂາຍຢາຕ່າງໆ. ໃຫ້ເຂົ້າໄປໃຊ້ eligibility checker ເພື່ອຊອກຫາຄລີນິກທີ່ຢູ່ໃນລັດແລະເຂດປົກຄອງຂອງທ່ານ.

2. **ຄລີນິກຂອງລັດຖະບານປະຈຳລັດແລະເຂດປົກຄອງ:** ບັນດາພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸສາມາດໄດ້ຮັບບູລິມະສິດເຂົ້າໃຊ້ຄລີນິກສັກຢາໃຫ້ມວນຊົນເຊິ່ງດຳເນີນງານໂດຍລັດຖະບານປະຈຳລັດແລະເຂດປົກຄອງ. ໃຫ້ເຂົ້າໃຊ້ eligibility checker ເພື່ອຊອກຫາຄລີນິກດັ່ງກ່າວ ຢູ່ໃນລັດແລະເຂດປົກຄອງຂອງທ່ານ.

ນອກນີ້ ທ່ານກໍຍັງສາມາດໂທລະສັບຫາສາຍຊ່ວຍເຫຼືອສະເພາະ COVID-19 Vaccine Helpline ທີ່ໝາຍເລກ 1800 020 080 (ໃຫ້ກົດເລືອກເອົາທາງເລືອກທີ 4) ສຳລັບຄຳຖາມໃດໆທີ່ທ່ານອາດມີກ່ຽວກັບການສັກຢາວັກຊີນ ຫຼື ຕ້ອງການຄວາມຊ່ວຍເຫຼືອໃນການນັດຈອງເອົາເວລາສັກຢາ.

### ຂ້ອຍຕ້ອງເອົາຫຍັງໄປແດ່ເມື່ອໄປຮັບການສັກຢາຕາມນັດໝາຍ?

ບັນດາພະນັກງານດູແລຜູ້ສູງອາຍຸສາມາດຢັ້ງຢືນສິດທິຂອງຕົນໂດຍການສະເໜີເອກະສານຕ່າງໆດັ່ງຕໍ່ລົງໄປນີ້:

1. ເອກະສານຢັ້ງຢືນຕົວ (ຕົວຢ່າງ ໃບອະນຸຍາດຂັບຂີ່, ພາສປອດ, ໃບແຈ້ງເກີດ) **ແລະ**
2. ເອກະສານຢັ້ງຢືນການເຮັດວຽກ (ຕົວຢ່າງ ເອກະສານຢ່າງໃດໜຶ່ງຕໍ່ລົງໄປນີ້)
    - ຈົດໝາຍຈາກນາຍຈ້າງຂອງທ່ານ ທີ່ຢັ້ງຢືນວ່າທ່ານມີບູລິມະສິດໃນການເຂົ້າເຖິງ
    - ບັດ ID ຂອງພະນັກງານ ຫຼື ໃບແຈ້ງເງິນເດືອນໃນປັດຈຸບັນ ທີ່ຢັ້ງຢືນວ່າກຳລັງເຮັດວຽກເປັນພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸແຫ່ງໃດແຫ່ງໜຶ່ງ, **ແລະ**
3. ບັດ Medicare, ຖ້າທ່ານມີ.

### ຢາວັກຊີນຕ້ານ COVID-19 ແມ່ນປອດໄພ, ແຕ່ວ່າໃຫ້ລົມກັບທ່ານໝໍຂອງທ່ານຖ້າທ່ານມີຄຳຖາມຫຼືມີຄວາມກັງວົນໃດໆ.

ຢາວັກຊີນຕ້ານ COVID-19 ແມ່ນໄດ້ຜົນ ໃນການປົກປ້ອງຕົວທ່ານຈາກການເຈັບປ່ວຍຢ່າງຮ້າຍແຮງຫຼືເສັຍຊີວິດຍ້ອນ COVID-19. ຂໍ້ມູນກ່ຽວກັບ ຄວາມປອດໄພຂອງຢາວັກຊີນຕ້ານ COVID-19 ມີໄວ້ໃຫ້ທ່ານທີ່ນີ້.

## ການສັກຢາວັກຊີນທີ່ເປັນການບັງຄັບສຳລັບພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸ

ນັບຈາກວັນທີ 17 ກັນຍາ 2021, ການສັກຢາວັກຊີນຕ້ານ COVID-19 ຈະເປັນການບັງຄັບສຳລັບບັນດາພະນັກງານທີ່ເຮັດວຽກຢູ່ຕາມບ້ານພັກຜູ້ສູງອາຍຸ. ເມື່ອຮອດເວລານັ້ນ ບັນດາພະນັກງານຕ້ອງສັກຢາວັກຊີນຕ້ານ COVID-19 ຢ່າງນ້ອຍ ໜຶ່ງໂດສທຳອິດ.

ກົດລະບຽບສໍາລັບການສັກຢາຕ້ານ COVID-19 ທີ່ເປັນການບັງຄັບຂອງພະນັກງານທີ່ບ້ານພັກດູແລຜູ້ສູງອາຍຸ ໃຫ້ການຊີ້ນໍາຈາກຄະນະກໍາມະການຫຼັກໃນການປົກປ້ອງດູແລສຸຂະພາບແຫ່ງປະເທດອອສເຕຣເລັຍ ໃນຫົວຂໍ້ທີ່ວ່າການສັກຢາແບບບັງຄັບຈະນໍາມາໃຊ້ກັບໃຜ, ເຊິ່ງລວມເຖິງ:

- ບັນດາພະນັກງານທີ່ເຮັດວຽກເຕັມເວລາ, ບາງເວລາ ແລະ ຊົ່ວຄາວ ທີ່ຖືກວ່າຈ້າງໃຫ້ເຮັດວຽກຫຼືເຮັດວຽກຕາງໜ້າໃຫ້ບ້ານພັກດູແລຜູ້ສູງອາຍຸ (ເຊັ່ນພະນັກງານຈາກຂະແໜງການຕ່າງໆທີ່ມາເຮັດວຽກໃນພື້ນທີ່) ເພື່ອເຮັດວຽກກ່ຽວກັບ:
    - ການດູແລໂດຍຕົງ (ບັນດາພະຍາບານ; ພະນັກງານດູແລສ່ວນຕົວ; ເຈົ້າໜ້າທີ່ທາງການແພດໃນເຄືອຂ່າຍ, ແລະຜູ້ຊ່ວຍທາງການແພດໃນເຄືອຂ່າຍ)
    - ດ້ານການບໍລິຫານ (ພະແນກຕ້ອນຮັບ; ບໍລິຫານງານ; ຝ່າຍຈັດການ; ຝ່າຍບໍລິຫານ)
    - ວຽກງານເສີມ (ປຸງແຕ່ງອາຫານ; ເຮັດອະນາໄມ; ຊັກເຄື່ອງ; ເຮັດວຽກສວນ; ວຽກສ້ອມແປງ)
    - ການດູແລດ້ານການດໍາລົງຊີວິດ/ສັງຄົມ (ການປິ່ນປົວດ້ວຍດົນຕີ/ສິລະປະ), ແລະ
    - ການເດີນທາງ – ຮັບຜູ້ອາໄສຢູ່ບ້ານພັກອອກໄປທາງນອກ
- ບັນດາອາສາສະໝັກ ທີ່ຖືກຮັບໂດຍທາງບ້ານພັກເພື່ອມາເຮັດວຽກໃນພື້ນທີ່
- ບັນດານັກສຶກສາທີ່ມາຮໍ່າຮຽນຝຶກງານ ທີ່ບ້ານພັກດູແລຜູ້ສູງອາຍຸ, ແລະ
- ເຈົ້າໜ້າທີ່ທາງການແພດທີ່ມາໃຫ້ການດູແລຜູ້ອາໄສຢູ່ໃນບ້ານພັກ.

ລັດຖະບານປະຈໍາລັດແລະເຂດປົກຄອງຕ່າງໆຈະອອກຄໍາສັ່ງດ້ານສາທາລະນະສຸກແລະອອກຄໍາສັ່ງໃຫ້ປະຕິບັດການສັກຢາວັກຊີນທີ່ບັງຄັບນີ້. ຂໍແນະນໍາຢ່າງແຂງຂັນໃຫ້ທ່ານອ່ານຄໍາສັ່ງນີ້ເມື່ອມີເອກະສານທາງການອອກມາ.

## ການອູ້ມຊູສໍາລັບການສັກຢາວັກຊີນຕ້ານ COVID-19 ຂອງພະນັກງານດູແລບ້ານພັກຜູ້ສູງອາຍຸ

ໂຄງການ ທຶນຊ່ວຍເຫຼືອການສັກຢາວັກຊີນຕ້ານ COVID-19 ຂອງພະນັກງານບ້ານພັກດູແລຜູ້ສູງອາຍຸ ໄດ້ຕັ້ງຂຶ້ນມາເພື່ອໃຫ້ການອູ້ມຊູແກ່ພະນັກງານທີ່ອາດຕ້ອງການຄວາມຊ່ວຍເຫຼືອໃນການໄປຮັບການສັກຢາຢູ່ນອກພື້ນທີ່:

- ພະນັກງານທີ່ເຮັດວຽກແບບຊົ່ວຄາວທີ່ບ້ານພັກດູແລຜູ້ສູງອາຍຸຈະຖືກຈ່າຍໃຫ້ໂດຍຜ່ານນາຍຈ້າງຂອງຕົນ:
    - ເງິນບໍາລຸງຈໍານວນ $80 ຕໍ່ໂດສໜຶ່ງສໍາລັບການສັກວັກຊີນນອກສະຖານທີ່
    - ເງິນຂໍລາພັກສໍາລັບມື້ໜຶ່ງ ($185) ຖ້າວ່າຮູ້ສຶກບໍ່ສະບາຍຫຼັງຈາກສັກຢາແລ້ວ ແລະ ຖ້າເຂົາເຈົ້າບໍ່ມີສິດໄດ້ຮັບການລາພັກຢ່າງອື່ນ).
- ເງິນຈໍານວນຮອດ $500 ຕໍ່ສະຖານທີ່ດູແລຜູ້ສູງອາຍຸແຫ່ງໜຶ່ງ ກໍຈະມີໄວ້ໃຫ້ເພື່ອປະກອບສ່ວນໃນການຈັດແຈງໃຫ້ບັນດາພະນັກງານໄດ້ໄປສັກຢານອກພື້ນທີ່, ເຊັ່ນຄ່າໃຊ້ຈ່າຍໃນການເດີນທາງ.

ການຍື່ນຄຳຮ້ອງຂໍເງິນໃນໂຄງການໃຫ້ທຶນຊ່ວຍເຫຼືອນີ້ແມ່ນຜູ້ບໍລິການດູແລຜູ້ສູງອາຍຸຈະເປັນຜູ້ຍື່ນຄຳຮ້ອງ, ແລະ ທ່ານສາມາດປຶກສາເລື່ອງໂຄງການທຶນຊ່ວຍເຫຼືອນີ້ ກັບສະຖານທີ່ດູແລຜູ້ສູງອາຍຸຂອງທ່ານ.